ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 748 /ຈນວ
ລົງວັນທີ 15.12.2020

# ຂໍ້ຕົກລົງ
# ວ່າດ້ວຍການສ້າງນະຄອນຫຼວງວຽງຈັນສະຫວ່າງ

- ອີງຕາມມາດຕາ19, 20ໝວດທີ4ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດແລະໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມມາດຕາ 33 ແລະ 105ກົດໝາຍວ່າດ້ວຍໄຟຟ້າສະບັບເລກທີ 19/ສພຊ, ລົງວັນທີ 9 ພຶດສະພາ 2017;
- ອີງຕາມມາດຕາ 78 ໝວດທີ 1 ພາກທີ XII ກົດໝາຍວ່າດ້ວຍຜັງເມືອງເລກທີ 40/ສພຊ, ລົງວັນທີ 16ພະຈິກ 2017;
- ອີງຕາມມະຕິຂອງກອງປະຊຸມຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ ສະບັບເລກທີ 014/ສປນວ, ລົງວັນທີ 16 ມິຖຸນາ 2020 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າຄອງວ່າດ້ວຍການສ້າງນະຄອນຫຼວງວຽງຈັນ ສະຫວ່າງ.

## ເຈົ້າຄອງນະຄອນຫຼວງວຽງຈັນຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການສ້າງນະຄອນຫຼວງວຽງຈັນສະຫວ່າງ ເພື່ອຮັບປະກັນຄວາມສະດວກສະບາຍ, ຄວາມປອດໄພໃນການສັນຈອນ; ເພີ່ມເວລາໃຫ້ແກ່ການດຳເນີນທຸລະກິດ, ການບໍລິການໃນພາກຄ່ຳຂອງຊາວນະຄອນ ແລະ ປະກອບສ່ວນພັດທະນານະຄອນຫຼວງວຽງຈັນໃຫ້ເປັນເມືອງໜ້າຢູ່, ອະສະລິຍະ ແລະ ຍືນຍົງ

**ມາດຕາ 2 ນິຍາມ**

ການສ້າງນະຄອນຫຼວງວຽງຈັນສະຫວ່າງແມ່ນການເພີ່ມຕື່ມ ຫຼື ຮັກສາລະດັບຄວາມຮຸ່ງແຈ້ງໃນຍາມກາງຄືນ ແລະ ການສ້າງທັດສະນີຍະພາບອ້ອມຂ້າງສອງຟາກທາງຕາມຜັງເມືອງຂອງເທດສະບານນະຄອນຫຼວງວຽງຈັນ, ເທດສະບານຂອງບັນດາເມືອງຕາມຕົວຊີ້ວັດຕ່າງໆທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ມາດຕາ 3 ອະທິບາຍຄຳສັບ

- **ນະຄອນຫຼວງວຽງຈັນສະຫວ່າງ**: ໝາຍເຖິງການເພີ່ມ ຫຼື ຮັກສາຄວາມຮຸ່ງແຈ້ງສະຫວ່າງໃນຍາມກາງຄືນ ແລະ ການສ້າງທັດສະນີຍະພາບອ້ອມຂ້າງສອງຟາກທາງຕາມຜັງເມືອງຂອງເທດສະບານນະຄອນຫຼວງວຽງຈັນ, ເທດສະບານຂອງບັນດາເມືອງຕາມຕົວຊີ້ວັດຕ່າງໆທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.
- **ທັດສະນີຍະພາບອ້ອມຂ້າງສອງຟາກຖະໜົນ**: ໝາຍເຖິງເຂດສະຫງວນຂອງສອງຟາກທາງ, ສະຖານທີ່ສາທາລະນະສະຖານ, ເຄຫະສະຖານທີ່ສາມາດເບິ່ງເຫັນຢ່າງທະລຸປຸໂປ່ງ ແລະ ສວຍງາມຕາມຜັງເມືອງ ໂດຍປັດສະຈາກສິ່ງຕ່າງໆເຊັ່ນ: ເທີບ-ເງີບ, ຊຸມສາຍຫ້ອຍຕາມເສົາໄຟຟ້າ, ການວາງຂາຍສິ່ງຂອງຕ່າງໆ, ສິ່ງເສດເຫຼືອ, ເຮືອນເກົ່າແກ່ທີ່ບໍ່ຈົບງາມ ແລະ ສິ່ງທີ່ບໍ່ຈຳເປັນອື່ນໆ
- **ຖະໜົນສະຫວ່າງ**: ໝາຍເຖິງຖະໜົນທີ່ມີແສງຮຸ່ງແຈ້ງດ້ວຍດອກໄຟເຍືອງທາງທີ່ພຽງພໍ, ມີເຄື່ອງໝາຍລະບົບການສັນຈອນ ແລະເຄື່ອງໝາຍສັນຍາລັກຕ່າງໆທີ່ເປັນສ່ວນປະກອບຂອງເສັ້ນທາງທີ່ສາມາດເບິ່ງເຫັນຢ່າງຈະແຈ້ງຊັດເຈນທັງກາງເວັນແລະກາງຄືນໃຫ້ແກ່ການສັນຈອນ;
- **ສາທາລະນະສະຖານສະຫວ່າງ**: ໝາຍເຖິງສວນສາທາລະນະ, ສະໜາມຫຼວງ, ບໍລິເວນສະໜາມບິນ, ທ່າເຮືອ, ດ່ານຊາຍແດນ, ສະຖານທີ່ ພັກຜ່ອນຢ່ອນໃຈຕ່າງໆມີຄວາມຮຸ່ງແຈ້ງດ້ວຍສີສັນທີ່ເໝາະສົມໃນຍາມກາງຄືນ ແລະ ມີທັດສະນີຍະພາບທີ່ດີໃນຍາມກາງເວັນຕາມຜັງເມືອງ;
- **ເຄຫາສະຖານສະຫວ່າງ**: ໝາຍເຖິງຕຶກອາຄານ, ສຳນັກງານຂອງລັດ, ຫ້າງຮ້ານບຸກຄົນ, ນິຕິບຸກຄົນ, ເຮືອນຢູ່ອາໄສທົ່ວໄປທີ່ມີຄວາມຮຸ່ງແຈ້ງດ້ວຍແສງສະຫວ່າງເຍືອງໃນຍາມກາງຄືນ ແລະ ມີສີສັນສະອາດສວຍງາມໃນຍາມກາງເວັນ;
- **ປູສະນີຍະສະຖານສະຫວ່າງ**: ໝາຍເຖິງສະຖານທີ່ເຄົາລົບບູຊາ ແລະ ທີ່ເພິ່ງທາງໃຈ ເຊັ່ນ: ວັດວາອາຮາມ, ສະຖານທີ່ສັກກາລະບູຊາ, ອານຸສາວະລີຮູບຫຼໍ່ຂອງບັນພະບູຫຼຸດລາວ, ສະຖານທີ່ທ່ອງທ່ຽວທາງວັດທະນະທຳແລະປະຫວັດສາດທີ່ມີຄວາມຮຸ່ງແຈ້ງໃນຍາມກາງຄືນໃຫ້ສາມາດເບິ່ງເຫັນໄດ້ເຖິງລວດລາຍ, ເອກະລັກ, ສິນລະປະອັນລະອຽດອ່ອນຂອງສິ່ງປູສະນີຍະສະຖານນັ້ນ;
- **ຕາມຜັງເມືອງ**: ໝາຍເຖິງ ເຂດສະຫງວນອ້ອມຂ້າງສອງຟາກທາງ, ສິ່ງປຸກສ້າງທີ່ອະນຸຍາດ ແລະ ສິ່ງປຸກສ້າງບໍ່ອະນຸຍາດ, ສະຖານທີ່ສະຫງວນ ແລະ ບໍ່ສະຫງວນອື່ນໆທີ່ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍຜັງເມືອງ ແລະ ລະບຽບການຄຸ້ມຄອງການປຸກສ້າງ;
- **ເຄື່ອງໝາຍວັດແທກຄວາມສະຫວ່າງ (Lux)** : ໝາຍເຖິງລະດັບຄວາມແຈ້ງສະຫວ່າງຂອງແສງ (ດອກໄຟເຍືອງ) ທີ່ເຍືອງສ່ອງໃສ່ພື້ນທີ່ໃດໜຶ່ງ;
- **ສາຍຫຸ້ມ**: ໝາຍເຖິງລະບົບສາຍຈຳໜ່າຍໄຟຟ້າທີ່ສະໜອງກະແສໄຟຟ້າໃຫ້ແກ່ການຊົມໃຊ້ທີ່ເນັ້ນໜັກໃຫ້ມີຄວາມປອດໄພສູງໃນເຂດທີ່ມີປະຊາກອນອາໄສຢູ່ໜາແໜ້ນ ເຊັ່ນ: ເຂດເທດສະບານນະຄອນຫຼວງ ແລະ ເທດສະບານເມືອງຕ່າງໆ;

- **ສາຍເປືອຍ**: ໝາຍເຖິງລະບົບສາຍຈຳໜ່າຍໄຟຟ້າທີ່ສະໜອງກະແສໄຟຟ້າໃຫ້ແກ່ການຊົມໃຊ້ທົ່ວໄປທີ່ບໍ່ໄດ້ເນັ້ນເລື່ອງຄວາມປອດໄພສູງທີ່ສາມາດໃຊ້ໄດ້ຢູ່ເຂດທີ່ມີປະຊາກອນອາໃສຢູ່ບໍ່ໜາແໜ້ນ ເຊັ່ນ: ເຂດຊານເມືອງ ແລະ ນອກເມືອງ;
- **ດອກໄຟປະຢັດ ຫຼື ດອກໄຟ LED**: ໝາຍເຖິງດອກໄຟທີ່ກິນກະແສໄຟໜ້ອຍ ແຕ່ສາມາດໃຫ້ແສງຮຸ່ງແຈ້ງຫຼາຍກວ່າ.
- **ຄວາມທັນສະໄໝ**: ໝາຍເຖິງມີລະບົບການບັນຊາການເປີດ-ປິດ, ສາມາດຕິດຕາມການທຳງານ, ການປ່ຽນຖ່າຍອຸປະກອນຂອງລະບົບໄຟເຍືອງຮຸ່ງທີ່ສະດວກ, ວ່ອງໄວທັນການ;
- **ຄວາມປອດໄພ**: ໝາຍເຖິງການນຳໃຊ້ອຸປະກອນສະໜອງໄຟຟ້າແສງສະຫວ່າງມີຄຸນນະພາບ, ຮັບປະກັນຄວາມປອດໄພຕໍ່ການສັນຈອນ, ການຊົມໃຊ້ ແລະ ເປັນມິດກັບສິ່ງແວດລ້ອມ;
- **ຄວາມຍືນຍົງ**: ໝາຍເຖິງຄວາມມີປະສິດທິພາບ, ປະຢັດກະແສໄຟຟ້າ, ແຂງແກ່ນທົນທານ, ສາມາດປ່ຽນຖ່າຍແທນກັນໄດ້ອຸປະກອນສິ້ນສ່ວນປະກອບຂອງດອກໄຟທີ່ຜະລິດອອກໃໝ່ຢ່າງຍາວນານ.

**ມາດຕາ 4 ນະໂຍບາຍຂອງອົງການປົກຄອງນະຄອນຫຼວງ**

ອົງການປົກຄອງນະຄອນຫຼວງມີນະໂຍບາຍການສ້າງນະຄອນຫຼວງວຽງຈັນສະຫວ່າງດັ່ງນີ້:

1) ສົ່ງເສີມການລົງທຶນປັບປຸງຍົກລະດັບຄວາມຮຸ່ງຂອງລະບົບໄຟເຍືອງທາງ ຊຶ່ງລວມທັງເສົາ, ສາຍ, ການນຳໃຊ້ອຸປະກອນທີ່ປະຢັດຄ່າກະແສໄຟຟ້າ ຢູ່ໃນເຂດເທດສະບານຂອງນະຄອນຫຼວງວຽງຈັນ ແລະ ເທດສະບານຂອງບັນດາເມືອງ;

2) ສົ່ງເສີມບຸກຄົນ ແລະ ນິຕິບຸກຄົນ ຍົກລະດັບ ຫຼື ຮັກສາຄວາມຮຸ່ງ, ການທາສີເຮືອນ, ອາຄານເຄຫະສະຖານ ໃຫ້ມີຄວາມຮຸ່ງແຈ້ງ, ສະອາດ, ສວຍງາມ ດ້ວຍຄວາມຮັບຜິດຊອບຂອງເຈົ້າຂອງສາທາລະນະສະຖານ ຫຼື ເຈົ້າຂອງເຄຫະສະຖານ;

3) ສົ່ງເສີມການລົງທຶນປັບປຸງລະບົບສາຍໄຟຟ້າເທິງກາງຫາວເອົາຝັງລົງພື້ນດິນ ດ້ວຍຮູບແບບສຳປະທານ (BOT, PPP) ຫຼື ຮູບແບບລົງທຶນທີ່ເໝາະສົມກັບລະບຽບການທາງການເງິນຂອງລັດ.

4) ບຸກຄົນ, ນິຕິບຸກຄົນຜູ້ທີ່ລົງທຶນເອົາສາຍໄຟຟ້າລົງໃຕ້ດິນດ້ວຍທຶນຂອງຕົນເອງ ຫຼື ການຊ່ວຍເຫຼືອລ້າຈະໄດ້ຮັບການຍ້ອງຍໍ ຫຼື ຫຼຽນໄຊ ຕາມລະບຽບການຂອງລັດທັນທີ.

**ມາດຕາ 5 ຫຼັກການສ້າງນະຄອນຫຼວງວຽງຈັນສະຫວ່າງ**

ຫຼັກການສ້າງນະຄອນຫຼວງວຽງຈັນສະຫວ່າງປະກອບມີ 4 ຫຼັກການດັ່ງນີ້:

1. ການຍົກລະດັບ ແລະ ການຮັກສາຄວາມຮຸ່ງແຈ້ງໃຫ້ສອດຄ່ອງໄປຕາມແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນຫຼວງວຽງຈັນ ປີ 2020-2025 ແລະ ແຜນຍຸດທະສາດຮອດປີ 2030 ທີ່ໄດ້ກຳນົດໄວ້ (ຄວາມສາມາດສະໜອງທຶນຂອງລັດ ແລະ ການປະກອບສ່ວນຂອງປະຊາຊົນ);
2. ປະຕິບັດໄປຕາມການແບ່ງງານ ແບ່ງຄວາມຮັບຜິດຊອບ ຄື: ນະຄອນຫຼວງ, ເມືອງ, ບ້ານ, ຄອບຄົວ, ອົງການຈັດຕັ້ງຂອງລັດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ;
3. ການປະກອບສ່ວນ, ການມີພັນທະຂອງສຳນັກງານອົງການທັງພາກລັດ, ບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ສັງຄົມ ສ້າງຄວາມຮຸ່ງແຈ້ງໃນຂອບເຂດຄວາມຮັບຜິດຊອບຂອງຕົນເອງ;

4. ການຍົກລະດັບ ແລະ ການຮັກສາຄວາມຮຸ່ງແຈ້ງຕ້ອງຮັບປະກັນຄວາມທັນສະໄໝ, ປະຢັດ, ປອດໄພ ແລະ ຍືນຍົງ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບການຈັດຕັ້ງຂອງພາກລັດ, ບຸກຄົນ, ນິຕິບຸກຄົນ, ຄອບຄົວ ທັງພາຍໃນ ແລະ ຕ່າງປະເທດ, ການເຄື່ອນໄຫວທຸລະກິດ ແລະ ດຳລົງຊີວິດປົກກະຕິ ຢູ່ໃນພື້ນທີ່ 300ບ້ານເຂດເທດສະບານຂອງນະຄອນຫຼວງວຽງຈັນ ແລະ ເຂດເທດສະບານຂອງເມືອງຕ່າງໆ ໃນໄລຍະແຕ່ປີ 2020-2025 ແລະ ຮອດ 2030.

## ໝວດທີ2
## ເປົ້າໝາຍ ແລະ ຕົວຊີ້ວັດ

**ມາດຕາ 7 ເປົ້າໝາຍ**

ເປົ້າໝາຍການສ້າງນະຄອນຫຼວງວຽງຈັນສະຫວ່າງປະກອບມີ 5 ເປົ້າໝາຍ ດັ່ງນີ້:

1. ຖະໜົນ ແລະ ເສັ້ນທາງສະຫວ່າງ;
2. ສາທາລະນະສະຖານສະຫວ່າງ;
3. ເຄຫາສະຖານສະຫວ່າງ;
4. ປູສະນີຍະສະຖານສະຫວ່າງ.
5. ທັດສະນີຍະພາບອ້ອມຂ້າງຖະໜົນ ແລະ ເສັ້ນທາງ.

**ມາດຕາ 8 ຕົວຊີ້ວັດຄວາມສະຫວ່າງ**

**8.1 ຖະໜົນ ແລະ ເສັ້ນທາງສະຫວ່າງ ປະກອບມີດັ່ງນີ້:**

1) ແສງໄຟເຍືອງທາງລົດ ແລະ ທາງຄົນຍ່າງທີ່ມີປະລິມານຄວາມຮຸ່ງຂອງແສງ 25 lux ຂຶ້ນໄປ (ລວມທັງໄຟສາທາລະນະ ແລະ ບໍ່ແມ່ນສາທາລະນະຢູ່ອ້ອມຂ້າງ);
2) ສາມາດເບິ່ງເຫັນລະບົບເຄື່ອງໝາຍສັນຍານຈະລາຈອນເຊັ່ນ: ໄຟອຳນາດ, ປ້າຍສັນຍານ, ທາງມ້າລາຍ, ເສັ້ນແບ່ງທາງ, ສີຂອບທາງ, ປ້າຍບອກທິດທາງ, ປ້າຍເຕືອນ;
3) ສ່ວນປະກອບອື່ນໆ ຂອງເສັ້ນທາງທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການສັນຈອນມີຄວາມສະດວກ ແລະ ປອດໄພ;

**8.2 ສາທາລະນະສະຖານສະຫວ່າງ, ປະກອບດ້ວຍ:**

1) ມີແສງໄຟເຍືອງໃຫ້ຄວາມຮຸ່ງ, ໄຟປະດັບຢູ່ພື້ນທີ່ສາທາລະນະເຊັ່ນ: ເດີ່ນສະໜາມຫຼວງ, ສວນສາທາລະນະ ແລະ ສວນຂອງບຸກຄົນ, ຫໍປະຊຸມ, ຫໍວັດທະນະທຳ, ສະຖານທີ່ພັກຜ່ອນ, ເດີ່ນຈອດລົດ, ທ່າເຮືອ, ດ່ານຊາຍແດນ, ເດີ່ນສຳນັກງານອົງການ, ຕະຫຼາດ, ຮ້ານຊັບພະສິນຄ້າ, ແລະ ອື່ນໆ...
2) ລະດັບຄວາມຮຸ່ງສາມາດ ອຳນວຍໃຫ້ກ້ອງວົງຈອນປິດ ແລະ ການເຄື່ອນໄຫວຂອງເຈົ້າໜ້າທີ່ປ້ອງກັນເວນຍາມ.

3) ຮັບປະກັນອຳນວຍຄວາມສະດວກໃຫ້ການເຄື່ອນໄຫວວຽກງານ ແລະ ຄວາມປອດໄພ ໃຫ້ພະນັກງານ, ເຈົ້າໜ້າທີ່ປະຕິບັດໜ້າທີ່ໃນຍາມກາງຄືນ.

**8.3 ເຄຫາສະຖານສະຫວ່າງ**

ເຄຫາສະຖານສະຫວ່າງປະກອບມີດັ່ງນີ້:

1) ມີແສງໄຟເຍືອງຮຸ່ງໃນຕຶກອາຄານ, ສຳນັກງານໂຮງການຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ, ເຮືອນຢູ່ອາໄສ ແລະ ປະຕູທາງເຂົ້າ, ກຳແພງ ໃຫ້ມີຄວາມຮຸ່ງແຈ້ງໃນຍາມກາງຄືນຕາມຄວາມເໝາະສົມ, ສາມາດອຳນວຍຄວາມສະດວກ ແລະ ຄວາມປອດໄພໃຫ້ຜູ້ປະຕິບັດໜ້າທີ່ ແລະ ປະກອບສ່ວນໃຫ້ຄວາມສະຫວ່າງອອກສູ່ຖະໜົນ ແລະ ເຂດໃກ້ຄຽງຄືນ;

2) ມີການຕົບແຕ່ງສີສັນ, ການທາສີ ດ້ານນອກຂອງຕົວອາຄານ ແລະ ສິ່ງປະກອບ (ປະຕູທາງເຂົ້າ, ກຳແພງ) ໃຫ້ມີຄວາມສະອາດສວຍງາມຕະຫຼອດທັງກາງເວັນ ແລະ ກາງຄືນ.

**8.4 ປູສະນີຍະສະຖານສະຫວ່າງປະກອບດ້ວຍ:**

1) ທຸກກິດຈະການປູສະນີຍະສະຖານໃຫ້ມີແສງໄຟເຍືອງຮຸ່ງທີ່ເໝາະສົມ ເຊັ່ນ: ວັດວາອາຣາມ, ສະຖານທີ່ສັກກາລະບູຊາ, ອານຸສາວະລີ, ຮູບປັ້ນຂອງບັນພະບູລຸດລາວ, ສະຖານທີ່ທ່ອງທ່ຽວທາງວັດທະນະທຳ ແລະ ປະຫວັດສາດ ໃຫ້ສາມາດອຳນວຍຄວາມສະດວກ ແລະ ຄວາມປອດໄພໃຫ້ການເຄື່ອນໄຫວເຮັດບຸນປະເພນີໃນຍາມກາງຄືນ.

2) ໃນກໍລະນີປູສະນີຍະສະຖານສຳຄັນຫຼັກແຫຼ່ງໃຫ້ສາມາດເບິ່ງເຫັນໄດ້ເຖິງລວດລາຍ, ເອກະລັກ, ສິນລະປະອັນລະອຽດອ່ອນຂອງສິ່ງປູສະນີຍະສະຖານນັ້ນໆ ລວມທັງຮັກສາໃຫ້ມີສີສັນທີ່ເໝາະສົມຕະຫຼອດເວລາ.

**8.5 ທັດສະນີຍະພາບອ້ອມຂ້າງສອງຟາກຖະໜົນ ແລະ ເສັ້ນທາງປະກອບດ້ວຍ:**

1) ທຸກກິດຈະການທີ່ປຸກສ້າງ 2 ຟາກທາງໃຫ້ຄຳນຶງເຖິງຄວາມສີວິໄລ, ມີຄວາມງາມ, ຄວາມແນມເຫັນໄດ້ໄກຂອບເຂດທັດສະນີຍະພາບທີ່ດີຢູ່ອ້ອມຂ້າງສອງຟາກທາງ ໃຫ້ຖືເອົາຕາມເຂດສະຫງວນທີ່ກົດໝາຍວ່າດ້ວຍຜັງເມືອງກຳນົດໄວ້ ໃຫ້ສາມາດເບິ່ງເຫັນຢ່າງທະລຸປອດໂປ່ງທີ່ບໍ່ມີສິ່ງກີດຂວາງກັ້ນບັງ ເຊັ່ນ: ເທີບ, ເງິບ, ຕູບ, ຂຸມສາຍໂທລະຄົມການສື່ສານ, ປ້າຍໂຄສະນາການວາງສິ່ງຂອງທີ່ບໍ່ເປັນລະບຽບຮຽບຮ້ອຍ, ຄວາມບໍ່ສະອາດ ແລະ ອື່ນໆ.

## ໝວດທີ 3
## ແຜນຈັດຕັ້ງປະຕິບັດ

ມາດຕາ 9 ແຜນການສ້າງນະຄອນຫຼວງວຽງຈັນສະຫວ່າງແຕ່ປີ 2020-2021

9.1 ຈັດຕັ້ງເຜີຍແຜ່ ແລະ ສຳມະນາ

9.1.1 ຈັດຕັ້ງເຜີຍແຜ່ໃຫ້ການນຳຂັ້ນນະຄອນຫຼວງ

9.1.2 ຈັດຕັ້ງເຜີຍແຜ່ໃຫ້ບັນດາອົງການຈັດຕັ້ງຂອງລັດຂັ້ນສູນກາງ

9.1.3 ຈັດຕັ້ງເຜີຍແຜ່ຂັ້ນເມືອງ

9.1.4 ຈັດຕັ້ງເຜຍແຜ່ລົງສູ່ຂັ້ນບ້ານ ໂດຍເຊີນຄອບຄົວປະຊາຊົນເຂົ້າຮ່ວມ

**9.2 ສ້າງຖະໜົນສະຫວ່າງ**

9.2.1 ສຸມໃສ່ຍົກລະດັບໄຟເຍືອງທາງເຂດຫົວເມືອງກອນຈຳນວນ7ເສັ້ນທາງຄື: ❶ຖະໜົນລ້ານຊ້າງ (ທັດຄຳ-ອ້ອມປະຕູໄຊ),❷ຖະໜົນ23 ສິງຫາ (ແຕ່ສີ່ແຍກ ກະຊວງ ຍທຂ-ວົງວຽນທາດຫຼວງ), ❸ຖະໜົນໄກສອນພົມວິຫານຊ່ວງທີ1 (ແຕ່ປະຕູໄຊ-ວົງວຽນ 450ປີ), ❹ຖະໜົນໜອງບອນ (ແຕ່ໄຟແດງໜອງບອນ-ວົງວຽນ 450 ປີ), ❺ຖະໜົນທ່າພະແກ້ວ (ແຕ່ສາມແຍກທັດຄຳ- ສີ່ແຍກທຸດຝັ່ງ-ມະໂຫສົດ-ສາມແຍກແຄມຂອງ), ❻ຖະໜົນຕາຝັ່ງເຈື່ອນ (ແຕ່ສາມແຍກແຄມຂອງສວນເຈົ້າອານຸວົງ-ສາມແຍກປາກປ່າສັກ), ❼ ຖະໜົນຟ້າງຸ່ມ (ແຕ່ສາມາແຍກປາກປາສັກ-ສີ່ແຍກມະໂຫສົດ) ເພື່ອຂໍານັບຊົມເຊີຍວັນສະຖາປະນາ ສປປ ລາວ ຄົບຮອບ 45ປີ.

9.2.2 ປັບປຸງລະບົບສັນຍານຈະລາຈອນຕາມບັນດາຖະໜົນເຂດເມືອງກອນຈຳນວນ7ເສັ້ນທາງ, ຕາມຕົວຊີ້ວັດທີ່ກຳນົດໄວ້ໃນມາດຕາ 8 ຂໍ້ 8.1. ຂໍ້ 2

**9.3 ສາທາລະນະສະຖານສະຫວ່າງ**

9.3.1 ສຸມໃສ່ການປັບປຸງລະບົບນ້ຳເພື່ອຂໍານັບຊົມເຊີຍວັນສະຖາປະນາ ສປປ ລາວ ຄົບຮອບ 45ປີ.ພຸ, ລະບົບໄຟເຍືອງສວນ ແລະ ເພີ່ມສີສັນຢູ່ເຂດສວນປະຕູໄຊໃຫ້ສຳເລັດເພື່ອຂໍານັບຊົມເຊີຍວັນສະຖາປະນາ ສປປ ລາວ ຄົບຮອບ 45ປີ.

9.3.2 ປັບປຸງຄວາມສະຫວ່າງດ້ວຍແສງໄຟປະດັບປະດາຕາມສາທາລະນະສະຖານຕ່າງໆໃຫ້ມີຄວາມຮຸ່ງແຈ້ງສະຫວ່າງຕາມສະພາບເງື່ອນໄຂຕົວຈິງຂອງແຕ່ລະຜູ້ເປັນເຈົ້າຂອງສາທາລະນະສະຖານ.

**9.4 ເຄຫາສະຖານສະຫວ່າງ**

ປັບປຸງໃຫ້ມີຄວາມຮຸ່ງສະຫວ່າງ ແລະ ສີສັນດ້ານນອກຕຶກອາຄານສຳນັກງານທັງພາກລັດ, ເອກະຊົນ, ອົງການຈັດຕັ້ງສັງຄົມ ແລະ ທີ່ຢູ່ອາໃສທີ່ຕັ້ງລຽບຕາມ7ເສັ້ນທາງເຂດຫົວເມືອງກອນ ແລະ ເຂດອື່ນໆໃຫ້ມີຄວາມຮຸ່ງສະຫວ່າງ ແລະ ງາມຕາ.

**9.5 ປູສະນີຍະສະຖານສະຫວ່າງ**

ປູສະນີຍະສະຖານທີ່ສຳຄັນຕ່າງໆເຊັ່ນ: ປະຕູໄຊ, ທັດທຳມະສະພາ, ວັດທາດຫຼວງ, ທ່າພະແກ້ວ, ຮູບຫຼໍ່ປະທານໄກສອນພົມວິຫານ, ປະທານສຸພານຸວົງ, ອານຸສາວະລີດາວແດງ, ແລະ ຈຸດອື່ນໆ ໃຫ້ປັບປຸງເພີ່ມຫຼື ຮັກສາຄວາມຮຸ່ງແຈ້ງສະຫວ່າງທີ່ເໝາະສົມ.

**9.6 ສະຫວ່າງດ້ວຍທັດສະນີຍະພາບອ້ອມຂ້າງສອງຟາກຖະໜົນຕາມຜັງເມືອງ**

ປັບປຸງທັດສະນີຍະພາບຢູ່ຖະໜົນເຂດໃຈກາງເມືອງຈຳນວນ 7 ເສັ້ນທາງ ແລະ ເສັ້ນທາງສຳຄັນອື່ນໆຕາມຕົວຊີ້ວັດທີ່ກຳນົດຢູ່ໃນມາດຕາ 8 ຂໍ້ 8.5.

ມາດຕາ 10 ແຜນການສ້າງນະຄອນຫຼວງວຽງຈັນສະຫວ່າງແຕ່ປີ 2021-2025

**10.1 ສ້າງຖະໜົນ ແລະ ເສັ້ນທາງສະຫວ່າງ**

- ຍົກລະດັບລະບົບໄຟຟ້າແສງສະຫວ່າງເບື້ອງທາງ ຕາມເສັ້ນທາງສາຍຫຼັກເຂດເທດສະບານຕົວເມືອງໃນນະຄອນຫຼວງວຽງຈັນ ຈຳນວນ 13 ຖະໜົນສາຍຫຼັກ ແລະ 20ຖະໜົນສຳຮອງ (ລະອຽດຈະມີເອກະສານຊ້ອນທ້າຍ),
- ປັບປຸງລະບົບສັນຍານຈະລາຈອນຕາມຈຸດຕ່າງໆ ໃນຈຳນວນ 28 ຖະໜົນສາຍຫຼັກ ແລະ ເສັ້ນທາງທີ່ສ້າງຂຶ້ນໃໝ່ (ລະອຽດຈະມີເອກະສານຊ້ອນທ້າຍ).
- ນອກຈາກແຜນເສັ້ນທາງທີ່ກຳນົດແລ້ວ ແມ່ນມອບໃຫ້ບັນດາເມືອງສ້າງແຜນການຂັ້ນເມືອງໂດຍໃຫ້ສຸມໃສ່ເຂດຊຸມຊົນໜາແໜ້ນ, ເຂດທີ່ເປັນເທດສະບານ ແລະ ເຂດຂະຫຍາຍໃໝ່ຢູ່ພາຍໃນເມືອງຂອງຕົນ ຕາມກຳນົດໃນມາດຕາ 8 ຂໍ້ 8.1

**10.2 ສະຖານທີ່ສາທາລະນະສະຫວ່າງ**

- ປັບປຸງຍົກລະດັບຄວາມສະຫວ່າງດ້ວຍແສງໄຟປະດັບປະດາສາທາລະນະສະຖານເຊັ່ນ: ເດີ່ນສະໜາມຫຼວງ, ສວນໄຊເສດຖາ, ສວນເຈົ້າອະນຸວົງແຄມຂອງ, ສວນເຈົ້າຟ້າງຸ່ມ ແລະ ການສ້າງຂຶ້ນໃໝ່.
- ສຳລັບສາທາລະນະສະຖານທີ່ຂຶ້ນກັບການຄຸ້ມຄອງຂອງຂັ້ນເມືອງ, ຂັ້ນບ້ານ, ຂອງບັນດາອົງການຈັດຕັ້ງພາກລັດ, ບຸກຄົນ, ແລະ ນິຕິບຸກຄົນ ເຊັ່ນ: ເດີ່ນພາຍໃນເຂດຂອງສຳນັກງານ, ອົງການ, ສະຖານີຂົນສົ່ງໂດຍສານ, ໂຮງຮຽນ ແລະ ອື່ນໆ ມອບໃຫ້ເປັນຄວາມຮັບຜິດຊອບຂອງເຈົ້າຂອງສາທາລະນະສະຖານເປັນເຈົ້າການໃນການປັບປຸງແກ້ໄຂໃຫ້ມີຄວາມຮຸ່ງແຈ້ງສະຫວ່າງ ແລະ ປອດໄພ ຕາມກຳນົດໃນມາດຕາ 8 ຂໍ້ 8.2 ເຊິ່ງຄວາມເປັນເຈົ້າການຂອງພາກສ່ວນເຈົ້າຂອງຄຸ້ມຄອງເປັນຜູ້ປະຕິບັດ.

**10.3 ເຄຫາສະຖານສະຫວ່າງ**

ບັນດາຕຶກອາຄານຂອງສຳນັກງານທັງພາກລັດ, ບຸກຄົນ, ນິຕິບຸກຄົນ ແລະ ທີ່ຢູ່ອາໄສທົ່ວໄປ ເຊັ່ນ: ຕຶກອາຄານບັນດາອົງການຈັດຕັ້ງຂອງລັດ, ລວມໝູ່, ສຳນັງານປົກຄອງເມືອງ, ພະແນກການ, ຫ້ອງການ, ອົງການທຽບເທົ່າ, ໂຮງຮຽນ, ໂຮງໝໍ, ທີ່ຢູ່ອາໄສຂອງຄອບຄົວສ່ວນບຸກຄົນ, ຫ້າງຮ້ານທຸລະກິດທຸກປະເພດທີ່ຕັ້ງຢູ່ຕາມແຄມຖະໜົນສາຍຕ່າງໆໃນເຂດເທດສະບານນະຄອນຫຼວງ 300 ບ້ານ ແລະ ໃນເຂດເທດສະບານຂອງເມືອງຕ່າງໆ ໃຫ້ປັບປຸງ ຫຼື ຮັກສາໃຫ້ມີແສງສະຫວ່າງຮຸ່ງເຮືອງແຈ້ງ ແລະ ສີສັນສະອາດສວຍງາມຕາມຕົວຊີ້ວັດທີ່ກຳນົດໃນມາດຕາ 8 ຂໍ້ 8.3. ເຊິ່ງຄວາມເປັນເຈົ້າການຂອງພາກສ່ວນທີ່ເປັນເຈົ້າຂອງ ແລະ ຄຸ້ມຄອງເປັນຜູ້ປະຕິບັດ.

**10.4 ປູສະນີຍະສະຖານສະຫວ່າງງຕ່າງໆ**

ປູສະນີຍະສະຖານປະກອບມີ ຄື: ທາດຫຼວງ, ຫໍທຳມະສະພາ, ວັດຕ່າງໆ, ຮູບຫຼໍ່ບັນພະບຸລຸດລາວ (ພະເຈົ້າໄຊຍະເສດຖາທິລາດ, ເຈົ້າຟ້າງຸ່ມ, ເຈົ້າອານຸວົງ, ປະທານໄກສອນພົມວິຫານ, ອານຸສາວະລີດາວແດງ, ...) ປັບປຸງ ຫຼື ຮັກສາໃຫ້ມີຄວາມຮຸ່ງແຈ້ງສະຫວ່າງ ແລະ ສະອາດງາມຕາ ຕາມກຳນົດໃນມາດຕາ 8 ຂໍ້ 8.4. ເຊິ່ງຄວາມເປັນເຈົ້າການຂອງພາກສ່ວນເຈົ້າຂອງຄຸ້ມຄອງເປັນຜູ້ປະຕິບັດ.

**10.5 ທັດສະນີຍະພາບສະຫວ່າງຫໍທຳມະສະພາ,**

ປັບປຸງທັດສະນີຍະພາບອ້ອຂ້າງສອງຟາກຖະໜົນໃນຈຳນວນ 28 ຖະໜົນສາຍຫຼັກ ແລະ ຖະໜົນສາຍສຳຮອງ ແລະ ສາຍທາງຮ່ອມທາງຊອຍຕ່າງໆໃນເຂດໃຈກາງນະຄອນຫຼວງວຽງຈັນໃຫ້ເປັນລະບຽບຮຽບຮ້ອຍສະອາດຈົບງາມຕາມກຳນົດໃນມາດຕາ 8 ຂໍ້ 8.5 ເຊິ່ງຄວາມເປັນເຈົ້າການຕາມການແບ່ງງານແບ່ງຄວາມຮັບຜິດຊອບຂອງຂັ້ນນະຄອນຫຼວງ, ເມືອງ, ບ້ານ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ເປັນເຈົ້າການປະຕິບັດ.

**ມາດຕາ11 ແຜນການສ້າງນະຄອນຫຼວງວຽງຈັນສະຫວ່າງແຕ່ປີ 2025-2030**

11.1 ແຕ່ລະຕົວຊີ້ວັດໄດ້ຮັບການຈັດຕັ້ງປະຕິບັດບັນລຸຫຼາຍກວ່າເຄິ່ງໜຶ່ງ ແລະ ຄວາມຮຸ່ງສະຫວ່າງຂອງນະຄອນຫຼວງຫຼາຍກວ່າ 2 ເທົ່າຕົວທຽບໃສ່ປີ 2020;

11.2 ການສ້າງນະຄອນຫຼວງສະຫວ່າງກາຍເປັນສະຕິ ແລະ ຄວາມເປັນເຈົ້າການຂອງຊາວນະຄອນຫຼວງຫຼາຍກວ່າ 80% ຂອງຄົວເຮືອນໃນເຂດຕົວເມືອງ.

11.3 ລະບົບແສງສະຫວ່າງສາທາລະນະໄດ້ຮັບການຍົກລະດັບທາງດ້ານມາດຕະຖານ, ມີຄວາມທັນສະໄໝ, ມີປະສິດທິພາບ ແລະ ປອດໄພສູງຂຶ້ນກວ່າ ປີ2020 3 ເທົ່າຕົວ.

## ໝວດທີ 4
## ອົງການຄຸ້ມຄອງ ແລະ ກວດກາ

ມາດຕາ12 ອົງການຄຸ້ມຄອງຈັດຕັ້ງປະຕິບັດ

ອົງການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ປະກອບດ້ວຍບັນດາອົງການຈັດຕັ້ງນະຄອນຫຼວງວຽງຈັນດັ່ງນີ້:

1. ອົງການປົກຄອງນະຄອນຫຼວງວຽງຈັນ
2. ພະແນກພະລັງງານແລະບໍ່ແຮ່
3. ລັດວິສາຫະກິດໄຟຟ້າລາວສາຂານະຄອນຫຼວງວຽງຈັນ
4. ພະແນກໂຍທາທິການແລະຂົນສົ່ງ ນະຄອນຫຼວງວຽງຈັນ
5. ຫ້ອງການຄຸ້ມຄອງແລະບໍລິການຕົວເມືອງວຽງຈັນ
6. ພະແນກໄປສະນີ, ໂທລະຄົມມະນາຄົມແລະການສື່ສານ
7. ພະແນກຖະແຫຼງຂ່າວ-ວັດທະນະທຳແລະທ່ອງທ່ຽວ
8. ອົງການປົກຄອງເມືອງ
9. ອົງການປົກຄອງບ້ານ

**ມາດຕາ 13 ສິດ ແລະ ໜ້າທີ່ຂອງບັນດາອົງການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ**

1. ອົງການປົກຄອງນະຄອນຫຼວງວຽງຈັນ
    1) ປະສານງານກັບບັນດາກະຊວງ, ອົງການສູນກາງທີ່ກ່ຽວຂ້ອງ, ໃຫ້ຂະແໜງການສູນກາງເປັນຜູ້ຄຸ້ມຄອງມະຫາພາກ, ຕິດຕາມ, ກວດກາແລະຊຸກຍູ້ນະຄອນຫຼວງວຽງຈັນໃນການຈັດຕັ້ງປະຕິບັດແຕ່ລະແຜນວຽກໃນຂອບເຂດເນື້ອທີ່ຂອງຕົນ;
    2) ນຳພາຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນວ່າດ້ວຍການສ້າງນະຄອນຫຼວງວຽງຈັນສະຫວ່າງ;
    3) ຊີ້ນຳ, ອຳນວຍຄວບຄຸມການຈັດຕັ້ງປະຕິບັດຕໍ່ພະແນກການ, ອົງການອ້ອມຂ້າງນະຄອນຫຼວງວຽງຈັນ ແລະອົງການຈັດຕັ້ງປະຕິບັດຂັ້ນເມືອງໃຫ້ເປັນເອກະພາບທົ່ວນະຄອນຫຼວງວຽງຈັນ;

4) ປຸກລະດົມ ພະນັກງານ-ລັດຖະກອນ, ນັກຮຽນຮູ້ປັນຍາຊົນ, ປະຊາຊົນບັນດາເຜົ່າໃຫ້ເຂົ້າໃຈແລະໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

5) ພິຈາລະນາຂໍ້ສະເໜີຂອງພາກສ່ວນຕ່າງໆເພື່ອອະນຸມັດງົບປະມານທີ່ຈຳເປັນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

6) ເປັນເຈົ້າໃນການໃຫ້ທິດຊີ້ນຳ, ຕິດຕາມ, ຮັບລາຍງານ ຈາກບັນດາພະແນກການ, ເມືອງ ແລະ ພາກສ່ວນຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

7) ສະຫຼຸບ, ຕີລາຄາແລະລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ສະພາປະຊາຊົນນະຄອນຫຼວງວຽງຈັນ ແລະລັດຖະບານຮັບຊາບຕາມລະບຽບການ;

2. ພະແນກພະລັງງານແລະບໍ່ແຮ່ນະຄອນຫຼວງວຽງຈັນ

1) ເປັນເຈົ້າການສົມທົບກັບພະແນກໂຍທາທິການແລະຂົນສົ່ງ ແລະຫ້ອງການຄຸ້ມຄອງແລະບໍລິການຕົວເມືອງວຽງຈັນໃນການສ້າງແຜນຂະຫຍາຍ ແລະ ຕິດຕັ້ງໄຟເຍືອງທາງ; ການປັບປຸງໄຟຟ້າຄົວເຮືອນໃຫ້ປອດໄພ;

2) ມີຄວາມຮັບຜິດຊອບໂດຍກົງໃນການກວດກາ, ແນະນຳທາງດ້ານເຕັກນິກວິຊາການແລະຢັ້ງຢືນຫົວໜ່ວຍລາຄາຂອງໂຄງການຕິດຕັ້ງໄຟແສງສະຫວ່າງຂອງພາກສ່ວນກ່ຽວຂ້ອງ;

3) ຄົ້ນຄວ້າສ້າງແຜນຊອກແຫຼ່ງລາຍຮັບໃນການພັດທະນາປະຕິຮູບໄຟຟ້າແສງສະຫວ່າງສາທາລະນະ.

4) ຂຶ້ນທະບຽນເສົາໄຟຟ້າຕາມແຄມຖະໜົນຫຼວງ, ສວນສາທາລະນະ, ສຳນັກງານ-ອົງການ ໃນເຂດເທດສະບານ ແລະ ເຂດຊານເມືອງ.

3. ພະແນກໂຍທາທິການແລະຂົນສົ່ງນະຄອນຫຼວງວຽງຈັນ

1) ມີຄວາມຮັບຜິດຊອບໂດຍກົງແລະ ເປັນເຈົ້າການຂຶ້ນແຜນໂຄງການລະອຽດໃນການປັບປຸງສ້ອມແປງລະບົບໄຟອຳນາດ, ປ້າຍສັນຍານຈະລາຈອນ, ປ້າຍຊີ້ບອກສະຖານທີ່, ບັນດາເສັ້ນຂີດໝາຍທາງ;

2) ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ,ແກ້ໄຂສິ່ງກີດຂວາງທີ່ປິດບັງທັດສະນີຍະພາບຕົວເມືອງຕາມເຂດທາງຫ້າມສອງຟາກທາງຕາມຜັງເມືອງ;

3) ສົມທົບກັບພະແນກພະລັງງານ ແລະ ບໍ່ແຮ່ໃນການຂະຫຍາຍແຜນການກໍ່ສ້າງ ແລະ ຕິດຕັ້ງລະບົບໄຟເຍືອງທາງ.

4. ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ

1) ມີຄວາມຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມກວດກາໄຟເຍືອງທາງ, ໄຟສວນສາທາລະນະ, ຂຶ້ນແຜນລາຍຈ່າຍບຳລຸງຮັກສາແລະຄ່າກະແສໄຟຟ້າສາທາລະນະ;

2) ເປັນເຈົ້າການໃນການອອກແບບ-ປະດັບໄຟສວນສາທາລະນະ, ຕົ້ນໄມ້ຕາມເສັ້ນທາງ;

3) ປະສານສົມທົບກັບພະແນກພະລັງງານແລະບໍ່ແຮ່, ລັດວິສາຫະກິດໄຟຟ້າລາວສາຂານະຄອນຫຼວງວຽງຈັນໃນການຂຶ້ນແຜນສ້ອມແປງແລະບຳລຸງຮັກສາໄຟເຍືອງທາງແລະໄຟສວນສາທາລະນະ.

5. ລັດວິສາຫະກິດໄຟຟ້າລາວສາຂານະຄອນຫຼວງວຽງຈັນ

1) ມີຄວາມຮັບຜິດຊອບເຂົ້າຮ່ວມການຂຶ້ນແຜນການສ້ອມແປງບຳລຸງຮັກສາລະບົບໄຟຟ້າເຍືອງທາງສາທາລະນະ;
2) ຮັບຜິດຊອບສຶກຈິກພະລັງງານແລະເກັບຄ່າກະແສໄຟຟ້າຈາກການຈຳໜ່າຍໃຫ້ລະບົບໄຟເຍືອງທາງ;
3) ຮັບຜິດຊອບເຂົ້າຮ່ວມກວດກາການກໍ່ສ້າງ, ການຕິດຕັ້ງແລະການນຳໃຊ້ໄຟເຍືອງທາງ;
4) ຈຳໜ່າຍ, ສະໜອງໄຟຟ້າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍໄຟຟ້າ.

6. **ພະແນກໄປສະນີໂທລະຄົມມະນາຄົມແລະການສື່ສານນະຄອນຫຼວງວຽງຈັນ**
ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການຂຶ້ນແຜນຈັດຕັ້ງປະຕິບັດຢ່າງລະອຽດໂດຍປະສານສົມທົບກັບບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງທັດສະນີຍະພາບຢູ່ຕາມເຂດທາງທັງສອງຟາກທາງ, ປັບປຸງແກ້ໄຂຊຸມສາຍ ແລະ ກວດກາ, ຕິດຕາມຢ່າງເປັນປົກກະຕິຕໍ່ຜູ້ລະເມີດ.

7. **ພະແນກຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວນະຄອນຫຼວງວຽງຈັນ**
1) ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂຶ້ນແຜນໂຄງການລະອຽດໃນການຈັດຕັ້ງປະຕິບັດຄວາມສະຫວ່າງດ້ວຍໄຟເຍືອງຢູ່ໃນສະຖານທີ່ ແລະປູສະນີຍະສະຖານ;
2) ແນະນຳທາງດ້ານວິຊາການກ່ຽວກັບການປະດັບດ້ວຍລະບົບແສງສະຫວ່າງແລະຄຸ້ມຄອງແສງສີຢູ່ຕາມສະຖານທີ່ບັນເທີງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

8. **ອົງການປົກຄອງເມືອງ**
1) ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງໂຄສະນາເຜີຍແຜ່ ປຸກລະດົມໃຫ້ປະຊາຊົນ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສັງຄົມຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນວ່າດ້ວຍການສ້າງນະຄອນຫຼວງວຽງຈັນສະຫວ່າງ;
2) ຕິດຕາມກວດກາບັນດາອົງກອນ ທີ່ຂຶ້ນກັບຕົນໃນການປະຕິບັດໜ້າທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.
3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ມີການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງໝູ່ບ້ານ ແລະ ເທດສະບານຂອງເມືອງຕົນ ບັນລຸຕົວຊີ້ວັດສະຫວ່າງໃນໄລຍະແຕ່ປີ 2020-2030.

9. **ອົງການປົກຄອງບ້ານ**
1) ມີຄວາມຮັບຜິດຊອບໂຄສະນາ, ເຜີຍແຜ່, ປຸກລະດົມ, ໃຫ້ຄວາມຮ່ວມມື, ປະສານສົມທົບ, ຕິດຕາມກວດກາ, ປະຕິບັດໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2) ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການສ້າງບ້ານຂອງຕົນບັນລຸຕົວຊີ້ວັດສະຫວ່າງ ໃນໄລຍະປີ 2020-2030.

**ມາດຕາ14 ອົງການຕິດຕາມ ກວດກາ ແລະ ສິດໜ້າທີ່:**

14.1 ອົງການຕິດຕາມ ແລະ ກວດກາປະກອບມີ:

1. ອົງການກວດກາພາຍໃນແມ່ນອົງການດຽວກັນກັບອົງການຄຸ້ມຄອງການສ້າງນະຄອນຫຼວງວຽງຈັນສະຫວ່າງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກປະກອບດ້ວຍ ສະຫະພັນແມ່ຍິງ, ຊາວໜຸ່ມ, ກຳມະບານ ຂັ້ນນະຄອນຫຼວງ ແລະ ຂັ້ນເມືອງ ນອກຈາກນັ້ນຍັງມີອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ.

**14.2 ສິດ ແລະ ໜ້າທີ່ຂອງອົງການຕິດຕາມກວດກາ**

14.2.1 ບັນດາອົງການວິຊາການ ຫຼື ກວດກາພາຍໃນປະຕິບັດສິດ ແລະ ໜ້າທີ່ ຂອງຕົນຕາມການກຳນົດໄວ້ຢູ່ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

14.2.2 ອົງການກວດກາພາຍນອກແມ່ນອົງການກວດກາລັດຂັ້ນຕ່າງໆ ທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ ຕິດຕາມ, ກວດກາ, ຊຸກຍູ້ ແລະ ກ່າວເຕືອນ, ທັງລົງວິໄນຕາມກົດໝາຍຕໍ່ການປະຕິບັດໜ້າທີ່ຂອງທຸກພາກສ່ວນທີ່ໄດ້ກຳນົດໄວ້ໃນມາດ 6 ແລະ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ແຫຼ່ງລາຍຮັບ ແລະ ລາຍຈ່າຍ

ມາດຕາ 15 ແຫຼ່ງລາຍຮັບ:

1. ງົບປະມານຂອງລັດໃນແຕ່ລະປີ (ຕາມລັດຖະບັນຍັດອາກອນຕົວເມືອງ);
2. ການປະກອບສ່ວນຂອງປະຊາຊົນ ແລະ ຂອງສັງຄົມ;
3. ການຊ່ວຍເຫຼືອລ້າຈາກທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບສະເພາະເພື່ອຄວາມສະຫວ່າງຂອງສຳນັກງານ-ຫ້ອງການຂອງພາກລັດຂັ້ນສູນກາງ-ອົງການທຽບເທົ່າ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ແມ່ນເປັນເຈົ້າການໃນການສ້າງແຜນຕາມເງື່ອນໄຂ, ທ່າແຮງ ແລະ ປະກອບສ່ວນທຶນຮອນປັບປຸງລະບົບແສງສະຫວ່າງໃນຂອບເຂດຄວາມຮັບຜິດຊອບຂອງຕົນເພື່ອໃຫ້ມີຄວາມຮຸ່ງສະຫວ່າງ, ປອດໄພ ແລະ ສວຍງາມ.

ມາດຕາ 16 ລາຍຈ່າຍ:

1. ຈ່າຍເຂົ້າໃນການຂະຫຍາຍລະບົບໄຟເບື້ອງທາງ, ໄຟສວນສາທາລະນະ, ລະບົບໄຟອຳນາດ, ປ້າຍສັນຍານຈະລາຈອນ, ປ້າຍຊີ້ບອກ ແລະ ເສັ້ນຂີດໝາຍທາງ.
2. ຈ່າຍເຂົ້າໃນຄ່າບຳລຸງຮັກສາ ແລະ ສ້ອມແປງລະບົບໄຟຟ້າສາທາລະນະ
3. ຈ່າຍຄ່າກະແສໄຟຟ້າລະບົບໄຟເບື້ອງທາງ ແລະ ໄຟສວນສາທາລະນະ.
4. ສຳລັບການຈ່າຍເພື່ອຄວາມສະຫວ່າງ ແລະ ການສິ້ນເປືອງອື່ນໆ ທີ່ບໍ່ແມ່ນສາທາລະນະ ເປັນຄວາມຮັບຜິດຊອບເອົາເອງ ຂອງບຸກຄົນ ແລະ ນິຕິບຸກຄົນ.

# ໝວດທີ 6
# ກົນໄກການຈັດຕັ້ງປະຕິບັດ, ພັນທະ ແລະ ຄວາມຮັບຜິດຊອບ

ມາດຕາ 17 ກົນໄກການຈັດຕັ້ງປະຕິບັດ:

17.1 ກົນໄກການສ້າງນະຄອນຫຼວງວຽງຈັນສະຫວ່າງ ເຄື່ອນໄຫວຕາມການແບ່ງງານ ແລະ ປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນຕາມທີ່ໄດ້ລະບຸໄວ້ໃນມາດຕາ 13 ແລະ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ເປັນຜູ້ນຳເອົາເນື້ອໃນໄປຈັດຕັ້ງຜັນຂະຫຍາຍສ້າງເປັນໂຄງການ, ເປັນແຜນການ, ແຜນງານ ແລະ ກິດຈະການລະອຽດຂອງພາກສ່ວນຕົນໃນແຕ່ລະໄລຍະ ແລະ ນຳພາປະຕິບັດຢ່າງເປັນຮູບປະທຳ.

17.2 ໃຫ້ປະເມີນຜົນການຈັດຕັ້ງປະຕິບັດແຜນງານຂອງຕົນຕໍ່ອົງການປົກຄອງນະຄອນຫຼວງວຽງຈັນຢ່າງເປັນປົກກະຕິ 6 ເດືອນ, 1 ປີ ແລະ 5 ປີ.

ມາດຕາ 18 ພັນທະ

ອົງການຈັດຕັ້ງລັດ, ບຸກຄົນ, ນິຕິບຸກຄົນທີ່ມີທີ່ຕັ້ງ ແລະ ອາໄສຢູ່ນະຄອນຫຼວງວຽງຈັນ ມີພັນທະໃນການປະຕິບັດເນື້ອໃນຂອງຂໍ້ຕົກລົງວ່າດ້ວຍການສ້າງນະຄອນຫຼວງວຽງຈັນສະຫວ່າງສະບັບນີ້ດັ່ງນີ້:

1. ມີພັນທະ ໃຫ້ຄວາມສະຫວ່າງດ້ວຍການໃຕ້ໄຟໃນຂອບເຂດຮອບນອກເຮືອນ ແລະ ພື້ນທີ່ຂອງຕົນເອງ.
2. ພົນລະເມືອງທຸກຄົນມີພັນທະຕາມກົດໝາຍໃນການປະກອບສ່ວນຈ່າຍອາກອນຕົວເມືອງກ່ຽວກັບກະແສໄຟຟ້າສາທາລະນະ.

ມາດຕາ 19 ຄວາມຮັບຜິດຊອບ:

ອົງການຈັດຕັ້ງລັດ, ບຸກຄົນ, ນິຕິບຸກຄົນທີ່ມີທີ່ຕັ້ງ ແລະ ອາໄສຢູ່ນະຄອນຫຼວງວຽງຈັນ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດເນື້ອໃນຂອງຂໍ້ຕົກລົງວ່າດ້ວຍການສ້າງນະຄອນຫຼວງວຽງຈັນສະຫວ່າງສະບັບນີ້ດັ່ງນີ້:

1. ຮັບຜິດຊອບໃນການປົກປັກຮັກສາຊັບສິນທີ່ໃຫ້ຄວາມສະຫວ່າງໃນຂອບເຂດຄວາມຮັບຜິດຊອບຂອງຕົນເອງ ແລະ ຂອງສ່ວນລວມ;
2. ມີຄວາມຮັບຜິດຊອບ ປົກປັກຮັກສາ ແລະ ທັກທ້ວງຕໍ່ຜູ້ລະເມີດເຮັດໃຫ້ຊັບສິນໄຟຟ້າສາທາລະນະເສຍຫາຍຕໍ່ອົງການກ່ຽວຂ້ອງ (ມາດຕາ 13)

# ໝວດທີ 7
# ຂໍ້ຫ້າມ, ມາດຕະການຕໍ່ຜູ້ລະເມີດ ແລະ ນະໂຍບາຍຕໍ່ຜູ້ມີຜົນງານ

ມາດຕາ 20 ຂໍ້ຫ້າມ:

20.1 ຫ້າມບຸກຄົນ, ນິຕິບຸກຄົນ ມີພຶດຕິກຳ, ເຈດຕະນາ, ທຳລາຍເສົາໄຟ ແລະ ອຸປະກອນ ຂອງລະບົບແສງສະຫວ່າງສາທາລະນະ ທັງຂອງລວມໝູ່ ແລະ ສ່ວນບຸກຄົນ ທີ່ຖືກສ້າງຂຶ້ນ ໃນໂຄງການສະຫວ່າງ.

20.2 ຫ້າມບຸກຄົນລະເມີດແຜນຜັງ ແລະ ມາດຖານລະບົບໄຟເບື້ອງຮຸ່ງສາທາລະນະ, ໃນກໍລະນີຖ້າມີຄວາມຈຳເປັນຕ້ອງການປ່ຽນແປງແກ້ໄຂທີ່ສິ່ງຜົນຕໍ່ໂຄງສ້າງ ແລະ ລະບົບເດີມ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການກ່ຽວຂ້ອງຂອງນະຄອນຫຼວງວຽງຈັນ ຫຼື ລັດຖະບານກ່ອນຈຶ່ງສາມາດປັບປຸງ, ປ່ຽນແປງໄດ້.

20.3 ຫ້າມຍົກຍ້າຍເສົາໄຟຟ້າ ທີ່ໄດ້ຂຶ້ນທະບຽນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຕັ້ງເສົາໄຟໃສ່ພື້ນທີ່ໆມີຄວາມສ່ຽງອາດຈະສ້າງຄວາມເສຍຫາຍຕໍ່ຊຸມຊົນ ແລະ ຜູ້ຢູ່ອາໃສອ້ອມຂ້າງ.

20.4 ຂໍ້ຫ້າມອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍກ່ຽວຂ້ອງ.

ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ:

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທີ່ບໍ່ເຂົ້າຮ່ວມປະກອບສ່ວນ, ເມີນເສີຍ ແລະ ມີພຶດຕິກຳ ບໍ່ສ້າງສັນຕໍ່ໂຄງການສ້າງນະຄອນຫຼວງວຽງຈັນສະຫວ່າງຈະຖືກສຶກສາອົບຮົມ, ກ່າວເຕືອນ, ທົດແທນຄ່າເສຍຫາຍຕາມກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍ.

ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທີ່ມີຜົນງານປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດການສ້າງນະຄອນຫຼວງວຽງຈັນສະຫວ່າງຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມນະໂຍບາຍສັນລະເສີນຂອງ ສປປລາວ ແລະ ອົງການປົກຄອງນະຄອນຫຼວງວຽງຈັນ ຕາມລະບຽບການ ທີ່ກຳນົດໄວ້.

## ໝວດທີ8
## ບົດບັນຍັດສຸດທ້າຍ

ມາດຕາ 23 ການຈັດຕັ້ງປະຕິບັດ

1. ອົງການຈັດຕັ້ງພາກລັດ, ອົງການຈັດຕັ້ງສັງຄົມຕ່າງໆທີ່ມີສຳນັກງານຢູ່ນະຄອນຫຼວງວຽງຈັນ ມີສ່ວນຮ່ວມເຂົ້າຮ່ວມຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
2. ພະແນກການ, ອົງການ, ຫ້ອງການທຽບເທົ່າ, ອົງການປົກຄອງເມືອງ, ອົງການປົກຄອງບ້ານທົ່ວນະຄອນຫຼວງວຽງຈັນຈົ່ງຮັບຮູ້, ອຳນວຍຄວາມສະດວກ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
3. ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ອາໃສຢູ່ໃນນະຄອນຫຼວງວຽງຈັນຈົ່ງຕື່ນຕົວ, ມີສ່ວນຮ່ວມ, ພັນທະ, ໜ້າທີ່ ແລະ ເປັນເຈົ້າການເພື່ອສ້າງນະຄອນຫຼວງວຽງຈັນສະຫວ່າງ.

4. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ນະຄອນຫຼວງວຽງຈັນເປັນເຈົ້າການນຳພາຈັດຕັ້ງປະຕິບັດ, ໂດຍພາຍໃຕ້ການອຳນວຍຄບຄຸມຂອງທ່ານຮອງເຈົ້າຄອງຜູ້ຊີ້ນຳຂະແໜງໃຫ້ໄດ້ຮັບຜົນດີ.

**ມາດຕາ24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄພທູນ

- ບ່ອນສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ | 1 ສະບັບ |
| - ຫ້ອງວ່າການສູນກາງພັກ | 1 ສະບັບ |
| - ຫ້ອງວ່າການສຳນັກງານນາຍົກ | 1 ສະບັບ |
| - ຄະນະເລຂາທິການ ສພຊ | 1 ສະບັບ |
| - ຫ້ອງການກະຊວງ ພບຮ | 1 ສະບັບ |
| - ຄະນະປະຈຳສະພາປະຊາຊົນ ນວ | 1 ສະບັບ |
| - ບັນດາເມືອງ | 9 ສະບັບ |
| - ບັນດາພາກສ່ວນທີ່ກ່ຽວຂ້ອງ | 1 ສະບັບ |
| - ສຳເນົາ | 2 ສະບັບ |